## ມິຊຊາອາທິດທີ 4 ກຳນົດປາສກາ
## ວັນທີ 30 ເມສາ 2023



**ພຣະວໍລະສານໂດຍນັກບຸນຢວງ 10, 1-10**

ພຣະເຢຊູເຈົ້າຊົງກ່າວແກ່ພວກຟາຣີເຊວວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ຜູ້ໃດບໍ່ເຂົ້າຄອກແກະທາງປະຕູແຕ່ໄປເຂົ້າທາງອື່ນ, ຜູ້ນັ້ນແມ່ນຂະໂມຍ, ແມ່ນນັກປຸ້ນ. ສ່ວນຜູ້ທີ່ເຂົ້າທາງປະຕູແມ່ນນາຍຊຸມພາບານ. ຄົນເຝົ້າປະຕູກໍໄຂຮັບເພິ່ນ; ຝູງແກະຈື່ສຽງປາກຂອງເພິ່ນໄດ້; ເພິ່ນເອີ້ນຊື່ແກະໄດ້ແຕ່ລະໂຕ, ແລ້ວພາມັນອອກໄປນອກ. ເມື່ອແກະທັງໝົດອອກໄປແລ້ວ, ເພິ່ນກໍຍ່າງໄປໜ້າ, ແລ້ວໝູ່ແກະກໍຍ່າງຕາມຫລັງ, ຍ້ອນມັນຈື່ສຽງຂອງເພິ່ນ. ແຕ່ຫາກເປັນຄົນແປກໜ້າ, ຝູງແກະກໍບໍ່ໄປນຳ; ກົງກັນຂ້າມ ມັນຈະປົບໜີ, ຍ້ອນວ່າມັນບໍ່ຮູ້ຈັກສຽງປາກຂອງຄົນຕ່າງໜ້າ." ພຣະເຢຊູເຈົ້າກ່າວຄວາມປຽບທຽບນີ້ໃຫ້ພວກເຂົາຟັງ, ແຕ່ພວກເຂົາບໍ່ເຂົ້າໃຈວ່າພຣະອົງຢາກເວົ້າຫຍັງ. ພຣະເຢຊູເຈົ້າຈຶ່ງຊ້ຳຄວາມອີກວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ເຮົາແມ່ນປະຕູຄອກແກະ. ທຸກຄົນທີ່ມາກ່ອນເຮົາກໍເປັນຂະໂມຍແລະນັກປຸ້ນ ແລະແກະບໍ່ໄດ້ຟັງຄວາມພວກນັ້ນ. ເຮົາແມ່ນປະຕູ; ຜູ້ທີ່ເຂົ້າມາທາງເຮົາຈະເຂົ້າອອກໄດ້ຢ່າງປອດໄພແລະຈະໄດ້ພົບທົ່ງຫຍ້າ. ສ່ວນຂະໂມຍມາຫາແຕ່ລັກ, ຂ້າແລະທຳລາຍ. ສ່ວນເຮົາ, ເຮົາມາເພື່ອໃຫ້ແກະມີຊີວິດ ແລະມີຊີວິດຢ່າງອຸດົມສົມບູນ."

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ**

ວັນອາທິດນີ້ເປັນວັນທີ່ພຣະກາຣິສຕະຈັກລະລຶກແລະພາວະນາເປັນພິເສດສໍາລັບກະແສຮຽກການເປັນຜູ້ນໍາປະຊາກອນຂອງພຣະເຈົ້າຄື: ພຣະສັງຄະລາດ, ພຣະສົງ, ນັກບວດຊາຍຍິງ. ດັ່ງນັ້ນ, ພຣະກາຣິສຕະຈັກຈຶ່ງໃຫ້ພວກເຮົາໄດ້ຟັງບົດອ່ານແລະພຣະວໍລະສານໂດຍນັກບຸນຍອງທີ່ກ່າວເຖິງນາຍຊຸມພະບານທີ່ດີ.

ເມື່ອກ່າວເຖິງຄວາມປຽບທຽບເລື່ອງນາຍຊຸມພະບານທີ່ດີ ແນ່ນອນພວກເຮົາທຸກຄົນລ້ວນແຕ່ເຄີຍໄດ້ຟັງແລະຮູ້ຈັກດີວ່າຜູ້ທີ່ເປັນນາຍຊຸມພະບານທີ່ດີແທ້ຈິງແລະເປັນປະຕູຄອກແກະນັ້ນແມ່ນພຣະເຢຊູເຈົ້າ. ແລະພວກເຮົາຜູ້ທີ່ເຊື່ອແລະຟັງສຽງຂອງພຣະອົງ ພວກເຮົາກໍເປັນຝູງແກະຂອງພຣະອົງ. ແຕ່ພວກເຮົາລືມໄປຢ່າງໜຶ່ງວ່າພຣະເຢຊູເຈົ້າບໍ່ພຽງແຕ່ເປັນນາຍຊຸມພະບານທີ່ດີແລະເປັນປະຕູຄອກແກະເທົ່ານັ້ນ, ພຣະອົງຍັງເປັນຜູ້ທີ່ເດີນເຂົ້າທາງປະຕູຄອກແກະຜູ້ທໍາອິດອີກດ້ວຍ. ໝາຍຄວາມວ່າແນວໃດ? ເພື່ອຈະເຂົ້າໃຈຄວາມໝາຍນີ້ໄດ້ ພວກເຮົາຕ້ອງເລີ່ມເຂົ້າໃຈຄວາມໝາຍຂອງຄໍາວ່າປະຕູຄອກແກະ.ປະຕູເປັນສິ່ງທີ່ທໍາໃຫ້ພວກເຮົາຂ້າມຜ່ານຈາກສະຖານທີ່ໜຶ່ງໄປຫາສະຖານທີ່ອື່ນ. ຫລືເວົ້າອີກຢ່າງ, ປະຕູຄອກແກະຂອງພຣະເຢຊູເຈົ້າທໍາໃຫ້ພວກເຮົາຂ້າມຜ່ານຈາກການເປັນຂ້ອຍທາດຂອງບາບໄປສູ່ເສລີພາບແຫ່ງການເປັນລູກຂອງພຣະບິດາເຈົ້າ, ຈາກຄວາມຕາຍໄປສູ່ຊີວິດ.

ແລະວັນນີ້ຖ້າພວກເຮົາຢາກຜ່ານທາງປະຕູຄອກແກະຂອງພຣະເຢຊູເຈົ້າ, ພວກເຮົາຕ້ອງຟັງສຽງຂອງພຣະອົງ. ສຽງຂອງພຣະອົງຄືວາຈາຂອງພຣະອົງທີ່ພວກເຮົາໄດ້ຟັງທຸກວັນແລະທຸກຄັ້ງໃນມິຊາບູຊານັ້ນເອງ. ຍ້ອນວາຈາຂອງພຣະອົງເປັນຫົນທາງທີ່ຈະນໍາພວກເຮົາໄປຫາພຣະບິດາ. ເປັນຄວາມຈິງທີ່ຈະທໍາໃຫ້ພວກເຮົາຮູ້ຈັກເຖິງຄວາມຮັກຂອງພຣະບິດາທີ່ມີຕໍ່ພວກເຮົາ. ແລະເປັນຊີວິດຍ້ອນວາຈາຂອງພຣະອົງທໍາໃຫ້ພວກເຮົາມີຊີວິດໃນພຣະອົງຜູ້ເປັນບໍ່ເກີດແຫ່ງຊີວິດ.

**ພາວະນາ**

ໂອພຣະເຢຊູເຈົ້າ ໃນວັນທີ່ພຣະກາຣິສຕະຈັກພາວະນາເປັນພິເສດສໍາລັບກະແສຮຽກຂອງຜູ້ມອບຖະຫວາຍຊີວິດ. ຂໍໃຫ້ລູກສໍາພັດໄດ້ເຖິງສຽງທີ່ພຣະອົງຮຽກເອີ້ນລູກທຸກວັນ, ເພື່ອລູກຈະໄດ້ເດີນຕາມສຽງຮຽກເອີ້ນນີ້ແລະຕອບຮັບຕໍ່ສຽງຮຽກເອີ້ນຂອງພຣະອົງໃນຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ